**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ເລກທີ: 0493/ຜ-ຟຟລ

ນະຄອນຫຼວງວຽງຈັນ, ວັນທີ 03/03/2021

# ໃບລາຍງານ

ຮຽນ: ທ່ານ ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ,

ທ່ານ ຜູ້ອຳນວຍການໃຫຍ່ ບໍລິສັດ ຕະຫຼາດຫຼັກຊັບລາວ ຈຳກັດ,

ເລື່ອງ: ແຈ້ງມະຕິກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1/2021.

- ອີງຕາມຂໍ້ຕົກລົງຂອງຄະນະກຳມະການຄຸ້ມຄອງຫຼັກຊັບ ວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ ສະບັບເລກທີ 04/ຄຄຊ, ລົງວັນທີ 28 ມັງກອນ 2019.
- ອີງຕາມລະບຽບຂອງຕະຫຼາດຫຼັກຊັບລາວ ວ່າດ້ວຍການເປີດເຜີຍຂໍ້ມູນ ເລກທີ 330/LSX, ລົງວັນທີ 27 ກັນຍາ 2018.

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (“ບໍລິສັດ”) ຂໍຖືເປັນກຽດແຈ້ງມະຕິ ຂອງກອງປະຊຸມວິສາມັນຜູ້ຖືຮຸ້ນຄັ້ງທີ 1/2021 ວັນທີ 03 ມີນາ 2021, ດັ່ງມີລາຍລະອຽດລຸ່ມນີ້:

ວາລະທີ 1. ຮັບຮອງບົດບັນທຶກກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1/2020, ວັນທີ 24 ກໍລະກົດ 2020. ກອງປະຊຸມໄດ້ມີມະຕິ ດ້ວຍຄະແນນສຽງ ຫລາຍກວ່າເຄິ່ງໜຶ່ງ ຂອງຈຳນວນສຽງທັງໝົດຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- **ເຫັນດີຈຳນວນ 1.524.322.608 ສຽງ, ເທົ່າກັບ 99,9998 ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.**
- **ບໍ່ເຫັນດີຈຳນວນ 3.500 ສຽງ, ເທົ່າກັບ 0,0002 ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ**

ວາລະທີ 2. ອະນຸມັດການຊອກຫາແຫຼ່ງທຶນ ໂດຍຜ່ານການອອກຈຳໜ່າຍຮຸ້ນກູ້ ແລະ/ຫຼື ການກູ້ຢືມເງິນຈາກສະຖາບັນການເງິນ ໃນວົງເງິນປະມານບໍ່ເກີນ 500 ລ້ານໂດລາສະຫະລັດ ຫຼື ທຽບເທົ່າໃນສະກຸນອື່ນໆ ເພື່ອລົງທຶນໃນການຂະຫຍາຍທຸລະກິດ, ການຊຳລະຄືນໜີ້ສິນເດີມທີ່ຈະຄົບກຳນົດ (Refinance ລວມທັງ ຮຸ້ນກູ້ ແລະ/ຫຼື ເງິນກູ້), ສ່ວນບ້ວງທີ່ຈະນຳມາລົງທຶນ ຫຼື ໃຊ້ຈ່າຍຕ່າງໆໃນການດຳເນີນທຸລະກິດຂອງບໍລິສັດ ລວມເຖິງເງິນທຶນໝູນວຽນຂອງບໍລິສັດແມ່ນໃຫ້ເປັນເອກະພາບໃນສະພາບໍລິຫານໃນແຕ່ລະໜ້າວຽກ. ມອບອຳນາດໃຫ້ສະພາບໍລິຫານຂອງບໍລິສັດ ແລະ/ຫຼື ຜູ້ທີ່ໄດ້ຮັບມອບໝາຍ ເປັນຜູ້ມີອຳນາດໃນການພິຈາລະນາ ແລະ ດຳເນີນວຽກງານ ກ່ຽວກັບການອອກຈຳໜ່າຍຮຸ້ນກູ້ ແລະ/ຫຼື ການກູ້ຢືມເງິນຈາກສະຖາບັນການເງິນ; ມີລາຍລະອຽດດັ່ງຕໍ່ໄປນີ້:

(1) ພິຈາລະນາ ແລະ ກຳນົດວົງເງິນ ທີ່ຈະອອກຈຳໜ່າຍຮຸ້ນກູ້ ແລະ/ຫຼື ການກູ້ຢືມເງິນຈາກສະຖາບັນການເງິນ, ລາຍລະອຽດທີ່ກ່ຽວຂ້ອງ ເຊັ່ນ ປະເພດຂອງຮຸ້ນກູ້, ເງິນກູ້ຢືມ, ຂໍ້ກຳນົດແລະເງື່ອນໄຂ, ໄລຍະເວລາການກູ້ຢືມ

ຫລືອາຍຸຂອງຮຸ້ນກູ້, ມູນຄ່າການກູ້ຢືມ ແລະ/ຫຼື ມູນຄ່າອອກຈຳໜ່າຍຮຸ້ນກູ້, ອັດຕາດອກເບ້ຍ, ສະກຸນເງິນ, ໄລຍະເວລາໃນການອອກ ແລະ ສະເໜີຂາຍ, ວິທີການຈັດສັນ, ວິທີການສະເໜີຂາຍ, ລາຍລະອຽດການສະເໜີຂາຍ;

(2) ການເປີດເຜີຍຂໍ້ມູນ, ຕິດຕໍ່, ການໃຫ້ຂໍ້ຄວາມ, ການໃຫ້ຂໍ້ມູນ, ດັດແກ້, ເພີ່ມເຕີມ, ຕົກລົງ, ລົງນາມ, ການສົ່ງມອບ ຄຳຮ້ອງຕ່າງໆ, ສັນຍາ ແລະ/ຫຼື ເອກະສານຕ່າງໆ ທີ່ຈຳເປັນ ແລະ ກ່ຽວຂ້ອງ ກັບການອອກຈຳໜ່າຍຮຸ້ນກູ້ ແລະ/ຫຼື ການກູ້ຢືມເງິນຈາກສະຖາບັນການເງິນ ໃຫ້ແກ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ຕະຫຼາດຫຼັກຊັບລາວ, ຄະນະກຳມະການກຳກັບຫຼັກຊັບແລະຕະຫຼາດຫຼັກຊັບ ປະເທດໄທ, ທະນາຄານແຫ່ງປະເທດໄທ, ສະມາຄົມຕະຫຼາດການສານໜີ້ແຫ່ງປະເທດໄທ, ໜ່ວຍງານລັດຖະບານ ແລະ/ຫຼື ອົງການຂອງລັດ ຫຼື ນິຕິບຸກຄົນ ຫຼືບຸກຄົນໃດ ທີ່ກ່ຽວຂ້ອງ;

(3) ຄັດເລືອກ, ແຕ່ງຕັ້ງ, ຖອດຖອນ ບໍລິສັດທີ່ປຶກສາ, ຜູ້ຈັດຈຳໜ່າຍຫຼັກຊັບ, ຜູ້ຮັບປະກັນການອອກຈຳໜ່າຍຫຼັກຊັບ, ຕົວແທນ, ທີ່ປຶກສາ, ຜູ້ຕາງໜ້າຜູ້ຖືຮຸ້ນກູ້, ຜູ້ຕາງໜ້າຜູ້ອອກຮຸ້ນກູ້, ນາຍທະບຽນ ແລະ ຕົວແທນຊຳລະ ແລະ/ຫຼື ບຸກຄົນອື່ນໆ ທີ່ຈຳເປັນ ແລະ ກ່ຽວຂ້ອງໃຫ້ແກ່ການດຳເນີນທຸລະກຳຈົນສຳເລັດ;

(4) ປະຕິບັດ ແລະ ດຳເນີນວຽກງານອື່ນໆທີ່ຈຳເປັນແລະກ່ຽວຂ້ອງ ເພື່ອການດຳເນີນທຸລະກຳດັ່ງກ່າວໃຫ້ສຳເລັດ, ລວມທັງໃຫ້ມີອຳນາດໃນການແຕ່ງຕັ້ງ ແລະ/ຫຼື ຖອດຖອນຜູ້ຮັບມອບອຳນາດໃນການດຳເນີນການໃດໜຶ່ງ ດັ່ງກ່າວຂ້າງເທິງນີ້ໄດ້ທຸກປະການ.

ກອງປະຊຸມໄດ້ມີມະຕິ ດ້ວຍຄະແນນສຽງຫລາຍກວ່າສອງສ່ວນສາມ (2/3) ຂອງຜູ້ເຂົ້າຮ່ວມກອງປະຊຸມ ແລະ ຖືຮຸ້ນລວມກັນຫລາຍກວ່າ 80 ສ່ວນຮ້ອຍ ຂອງຈຳນວນຮຸ້ນທີ່ຖອກແລ້ວທັງໝົດ, ດັ່ງນີ້:

**(ກ) ຈຳນວນຄົນຂອງຜູ້ຖືຮຸ້ນ ທີ່ເຂົ້າຮ່ວມກອງປະຊຸມ:**

1. **ເຫັນດີ 253 ຄົນ ເທົ່າກັບ 99,22 ສ່ວນຮ້ອຍ ທຽບໃສ່ຈຳນວນຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ.**
2. **ບໍ່ເຫັນດີ 2 ຄົນ ເທົ່າກັບ 0,78 ສ່ວນຮ້ອຍ ທຽບໃສ່ຈຳນວນຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ.**

**(ຂ) ຈຳນວນຮຸ້ນ (ສຽງ) ຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ:**

1. **ເຫັນດີ 1.524.320.108 ຮຸ້ນ (ສຽງ), ເທົ່າກັບ 90,77096 ສ່ວນຮ້ອຍ ທຽບໃສ່ຈຳນວນຮຸ້ນທີ່ຖອກແລ້ວທັງໝົດຂອງບໍລິສັດ.**
2. **ບໍ່ເຫັນດີ 6.000 ຮຸ້ນ (ສຽງ), ເທົ່າກັບ 0,00036 ສ່ວນຮ້ອຍ ທຽບໃສ່ຈຳນວນຮຸ້ນທີ່ຖອກແລ້ວທັງໝົດຂອງບໍລິສັດ.**

ຮຽນມາຍັງທ່ານເພື່ອຊາບ ແລະໃຊ້ຕາງລາຍງານ.

ດ້ວຍຄວາມນັບຖືຢ່າງສູງ,

**ຮອງປະທານສະພາບໍລິຫານ**

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ EDL-Generation Public Company

ຈັນທະບູນ ສຸກອາລຸນ